ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ

# ມາດຕະຖານ
# ການປະຕິບັດງານທີ່ດີສຳລັບຟາມລ້ຽງເປັດພັນຊີ້ນ ຫຼື ເປັດພັນໄຂ່ ຂອງ ສປປ ລາວ

| | | |
|---|---|---|
| ລະຫັດມາດຕະຖານ | : | ມກປ-ລປ-2022-00014 |
| STDCODE | : | AFSTD-LF-2022-00014 |

ພຶດສະພາ, 2022

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມລ້ຽງສັດ ແລະ ການປະມົງ

# ມາດຕະຖານ
# ການປະຕິບັດງານທີ່ດີສຳລັບຟາມລ້ຽງເປັດພັນຊີ້ນ ແລະ ເປັດພັນໄຂ່ ຂອງ ສປປ ລາວ

| | | |
|---|---|---|
| ລະຫັດມາດຕະຖານ | : | ມກປ-ລປ-2022-00014 |
| STDCODE | : | AFSTD-LF-2022-00014 |


ອົງການສ້າງມາດຕະຖານ:
ກົມລ້ຽງສັດ ແລະ ການປະມົງ
ຖະໜົນ ສຸພານຸວົງ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ
ນະຄອນຫຼວງວຽງຈັນ, ສປປ ລາວ, ຕປນ. 6644
ເບີໂທລະສັບ: +856 21 215242-3
ເບີໂທລະສານ: +856 21 215141
ເວບໄຊທ: http://dlf.maf.gov.la


ພຶດສະພາ, 2022

# ສາລະບານ


| | ໜ້າ |
|---|---|
| ຄຳນຳ | 0 |
| 1. ຈຸດປະສົງ | 1 |
| 2. ຂອບເຂດການນຳໃຊ້ | 1 |
| 3. ການອະທິບາຍຄຳສັບ | 1 |
| 4. ມາດຖະຖານຂອງຟາມລ້ຽງເປັດ | 2 |
| 5. ອາຫານເປັດ ແລະ ນ້ຳ | 4 |
| 6. ການຄຸ້ມຄອງ ບໍລິຫານຟາມ | 5 |
| 7. ການຈັດການດ້ານສຸຂະພາບເປັດ | 9 |
| 8. ການຂົນສົ່ງ ແລະ ການເກັບຮັກສາ | 12 |
| 9. ການບັນທຶກຂໍ້ມູນ ແລະ ການບັນທຶກຂໍ້ມູນ | 13 |
| 10. ການຄຸ້ມຄອງ ແລະ ຈັດການໄຂ່ | 14 |

## ຄຳນຳ

ມາດຕະຖານເຕັກນິກຟາມລ້ຽງເປັດສະບັບນີ້ ແມ່ນ ເຄື່ອງມືໜຶ່ງທີ່ສ້າງຂຶ້ນ ເພື່ອຜັນຂະຫຍາຍກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ, ນະໂຍບາຍແຫ່ງຊາດວ່າດ້ວຍຄວາມປອດໄພຂອງອາຫານ  ໂດຍມີຈຸດປະສົງໃຫ້ເປັນຄູ່ມືປະຕິບັດໃຫ້ແກ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ໃນການຄວບຄຸມ ມາດຕະຖານການຜະລິດເປັດຢູ່ໃນ ສປປ ລາວ ໃຫ້ມີຄຸນນະພາບ, ປອດໄພ, ເປັນມິດກັບສິ່ງແວດລ້ອມ ປະກອບສ່ວນໃນການສົ່ງເສີມຍົກລະດັບ ສິນຄ້າສັດຂອງ ສປປ ລາວ ໃຫ້ສາມາດແຂ່ງຂັນດ້ານການຄ້າກັບພາກພື້ນ, ຂົງເຂດ ແລະ ສາກົນ ໃຫ້ສູງຂຶ້ນ.

ເອກະສານນີ້ ໄດ້ກວມເອົາ ບັນດາຂໍ້ກຳນົດທີ່ເປັນມາດຕະຖານ ສຳລັບການປະຕິບັດງານຟາມລ້ຽງເປັດທີ່ດີ ເປັນຕົ້ນ ອົງປະກອບຂອງຟາມ, ສະຖານທີ່ຕັ້ງຟາມ, ພື້ນທີ່ ແລະ ການຈັດວາງຜັງຂອງຟາມ, ອາຄານຄອກສັດ ແລະ ໂຮງເຮືອນ ການຈັດການດ້ານອາຫານ ແລະ ນ້ຳ, ການຄຸ້ມຄອງ ບໍລິຫານຟາມ, ດ້ານສຸຂານາໄມໃນຟາມ, ການຈັດການຂອງເສັຍ ແລະ ສິ່ງແວດລ້ອມ, ການຈັດການດ້ານສຸຂະພາບສັດ, ການຈັດການດ້ານສະຫວັດດີການສັດ, ການຂົນສົ່ງ ແລະ ເກັບຮັກສາ ແລະ ການບັນທຶກຂໍ້ມູນ.

ກົມລ້ຽງສັດ ແລະ ການປະມົງ ຂໍແຈ້ງວ່າ ມາດຕະຖານເຕັກນິກສະບັບນີ້  ແມ່ນສ້າງຂຶ້ນບົນພື້ນຖານທີ່ໄດ້ຜ່ານການປຶກສາຫາລືຢ່າງກວ້າງຂວາງຈາກຜູ້ຊ່ຽວຊານ ແລະ ສອດຄ່ອງກັບມາດຕະຖານຂອງອາຊຽນ ແລະ ຄຳແນະນຳຂອງອົງການສຸຂະພາບສັດສາກົນແລ້ວ ແລະ ຫວັງວ່າຈະໃຫ້ກາຍເປັນມາດຕະຖານດຽວ ສຳລັບການກວດກາ ແລະ ຢັ້ງຢືນຟາມລ້ຽງເປັດຢູ່ໃນ ສປປ ລາວ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

ອອກທີ່: ນະຄອນຫຼວງວຽງຈັນ, ວັນທີ 06 MAY 2022

ອອກໂດຍ: **ຫົວໜ້າກົມ**

ນ. ອິໄລພອນ ວໍລະພົມ

1) ຈຸດປະສົງ

ມາດຕະຖານສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະຖານ ກ່ຽວກັບຟາມລ້ຽງເປັດ ເພື່ອຍົກລະດັບ ມາດຕະຖານການລ້ຽງເປັດຂອງ ສປປ ລາວ ໃຫ້ສູງຂຶ້ນ ແນໃສ່ ຮັບປະກັນໃຫ້ໄດ້ຊີ້ນ ແລະ ໄຂ່ເປັດສະອາດ, ປອດໄພ, ມີຄຸນນະພາບ ແລະ ເໝາະສົມສຳລັບການບໍລິໂພກ.

2) ຂອບເຂດການນຳໃຊ້

ມາດຕະຖານການປະຕິບັດງານທີ່ດີ ສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັ້ດຕັ້ງ ທີ່ດຳເນີນ ທຸລະກິດ ກ່ຽວກັບຟາມລ້ຽງເປັດ ພໍ່ແມ່ພັນ, ຟາມລ້ຽງເປັດໄຂ່ ແລະ ຟາມລ້ຽງເປັດຊີ້ນ ຢູ່ໃນ ສປປ ລາວ.

3) ການອະທິບາຍຄຳສັບ

1) **ລະບົບການລ້ຽງເປັດເພື່ອເປັນສິນຄ້າ** ໝາຍເຖິງ ຟາມລ້ຽງເປັດພໍ່ແມ່ພັນ, ເປັດໄຂ່, ເປັດຊີ້ນ ທີ່ມີເປົ້າໝາຍເພື່ອເປັນສິນຄ້າ;
2) ເປັດ ໝາຍເຖິງ ສັດປີກ ທີ່ນອນຢູ່ໃນຄອບຄົວ ອານາຕິເດ (Anatidae) ຊຶ່ງລ້ຽງເພື່ອຜະລິດຊີ້ນ, ໄຂ່ ເພື່ອບໍລິໂພກ;
3) ຄວາມປອດໄພທາງດ້ານຊີວະພາບ ໝາຍເຖິງ ຂັ້ນຕອນ ຫຼື ມາດຕະການ ທີ່ອອກແບບມາເພື່ອ ປ້ອງກັນ ກຸ່ມປະຊາກອນເປັດບໍ່ໃຫ້ຕິດເຊື້ອ ຫຼື ໄດ້ຮັບສານຊີວະເຄມີ ທີ່ເປັນອັນຕະລາຍ;
4) ຟາມເປັດ ໝາຍເຖິງ ສະຖານທີ່ ທີ່ມີຂອບເຂດສະເພາະໃດໜຶ່ງ ໂດຍໄດ້ຮັບອະນຸຍາດຈາກ ອົງການທີ່ກ່ຽວຂ້ອງໃຫ້ເປັນບ່ອນລ້ຽງ ເປັດ ຊຶ່ງມີສິ່ງປຸກສ້າງ, ສິ່ງອຳນວຍຄວາມສະດວກ, ເຄື່ອງມື ແລະ ອຸປະກອນກ່ຽວກັບການລ້ຽງເປັດເປັນຕົ້ນ ອ່າງຂ້າເຊື້ອ, ຄອກສັດ, ບ່ອນປະສົມ ແລະ ເກັບຮັກສາອາຫານສັດ;
5) ໂຮງເຮືອນ ໝາຍເຖິງ ສິ່ງປຸກສ້າງສຳລັບລ້ຽງເປັດ ທີ່ມີຫຼັງຄາ ແລະ ໂຄງສ້າງແຂງແກ່ນ, ມີບ່ອນສຳລັບ ໃຫ້ນ້ຳ ແລະ ໃຫ້ອາຫານສັດ ໂດຍພາຍໃນອາດຈະແບ່ງກັ້ນເປັນຄອກ ເພື່ອນຳໃຊ້ ຕາມຈຸດປະສົງຂອງການຜະລິດ;
6) ໂຮງເຮືອນປິດ ໝາຍເຖິງ ອາຄານ ຫຼື ສິ່ງປຸກສ້າງທີ່ສາມາດ ຄວບຄຸມສະພາບແວດລ້ອມໄດ້;
7) ໂຮງເຮືອນເປີດ ໝາຍເຖິງ ອາຄານ ຫຼື ສິ່ງປຸກສ້າງທີ່ບໍ່ສາມາດ ຄວບຄຸມສະພາບແວດລ້ອມໄດ້;
8) ອົງການຄຸ້ມຄອງທີ່ມີສິດອຳນາດ ໝາຍເຖິງ ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຄວາມຮູ້, ປະສົບການ ແລະ ອຳນາດທີ່ກຳນົດໄວ້ໃນ ກົດໝາຍ;
9) ຜູ້ບໍລິຫານຟາມ ໝາຍເຖິງ ເຈົ້າຂອງຟາມ ຫຼື ບຸກຄົນໃດໜຶ່ງ ທີ່ມີໜ້າທີ່ຮັບຜິດຊອບ ໃນການຄຸ້ມຄອງ ສັດພາຍໃນຟາມ;
10) ບຸກຄະລາກອນ ໝາຍເຖິງ ພະນັກງານ ແລະ ກຳມະກອນ ທີ່ມາປະຕິບັດໜ້າທີ່ຢູ່ພາຍໃນຟາມ ໃນຮູບແບບ ເຕັມເວລາ, ບາງເວລາ ຫຼື ແບບອາສາສະໝັກ.

4. ມາດຖະຖານຂອງຟາມລ້ຽງເປັດ

4.1 ອົງປະກອບຂອງຟາມ

4.1.1 ທີ່ຕັ້ງຂອງຟາມ

1) ການເລືອກສະຖານທີ່ຕັ້ງຟາມຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ຫຼື ທ້ອງຖິ່ນ;
2) ມີໄຟຟ້າ, ນໍ້າສະອາດເຂົ້າເຖິງຢ່າງພຽງພໍ ແລະ ມີລະບົບເສັ້ນທາງຄົມມະນາຄົມສະດວກ;
3) ຕ້ອງຕັ້ງຢູ່ ຫ່າງໄກຈາກ:
   - ອ່າງ ຫຼື ໜອງນໍ້າທໍາມະຊາດ ຊຶ່ງມັກມີນົກປ່າມາລົງເລື້ອຍໆ;
   - ໂຮງຂ້າສັດ ຫຼື ຕະຫລາດຄ້າຂາຍສັດ;
   - ເຂດທີ່ມີໂອກາດ ນໍ້າຖ້ວມ;
   - ສະພາບແວດລ້ອມທີ່ມີຄວາມສ່ຽງຕໍ່ການປົນເປື້ອນ ຈາກວັດຖຸ, ສານເຄມີ ແລະ ຊີວະພາບ ທີ່ເປັນອັນຕະລາຍ;
   - ເຂດທີ່ ບໍ່ສາມາດ ກໍາຈັດ ສິ່ງເສດເຫຼືອ ທີ່ເປັນທາດນໍ້າ ຫຼື ເປັນທາດກ້ອນ ໄດ້ຢ່າງມີປະສິດທິພາບ.

4.1.2 ແຜນຜັງຂອງຟາມ

1) ຕ້ອງອອກແບບ ແລະ ກໍ່ສ້າງ ອາຄານ ແລະ ສິ່ງອໍານວຍຄວາມສະດວກ ພາຍໃນຟາມ ໃຫ້ຖືກຕ້ອງ ແລະ ເໝາະສົມ ຕາມຈຸດປະສົງຂອງກິດຈະການ;
2) ມີສິ່ງອໍານວຍຄວາມສະດວກ ແລະ ເຄື່ອງມືສໍາລັບການປະຕິບັດມາດຕະການດ້ານປອດໄພທາງດ້ານຊີວະພາບຢ່າງມີປະສິດທິພາບ;
3) ມີຮົ້ວອອ້ມທີ່ໝັ້ນຄົງ ເຮັດດ້ວຍວັດສະດຸທີ່ທົນທານສາມາດປ້ອງກັນບໍ່ໃຫ້ສັດທາງນອກ ເຂົ້າມາໃນຟາມໄດ້;
4) ພາຍໃນແຕ່ລະໂຮງເຮືອນ ຕ້ອງມີລະບົບລະບາຍນໍ້າທີ່ມີປະສິດທິພາບ;
5) ມີການຈັດພື້ນທີ່ເປັນສັດສ່ວນ ຢ່າງຊັດເຈນ ເຊັ່ນ: ບ່ອນລ້ຽງເປັດ, ສາງເກັບອາຫານສັດ, ບ່ອນເກັບອຸປະກອນ, ບ່ອນກັກກັນສັດ, ບ່ອນແຍກສັດເຈັບປ່ວຍ, ບ່ອນທໍາລາຍ ຊາກເປັດ, ບ່ອນຈໍາໜ່າຍເປັດ ລວມທັງບ່ອນປ່ຽນຖ່າຍເຄື່ອງນຸ່ງຂອງກໍາມະກອນ, ຫ້ອງອາບນໍ້າ ແລະ ຫ້ອງສຸຂາ.

4.1.1 ໂຮງເຮືອນ

1) ຕ້ອງ ແໜ້ນໜາ ທີ່ສາມາດຮັບປະກັນວ່າ ບໍ່ໃຫ້ເປັດສາມາດໜີອອກໄປນອກໂຮງເຮືອນໄດ້;
2) ຕ້ອງໄດ້ອອກແບບການກໍ່ສ້າງໃຫ້ມີລັກສະນະ ດັ່ງນີ້:
   - ບໍ່ມີຄວາມສ່ຽງເຮັດໃຫ້ເປັດໄດ້ຮັບບາດເຈັບ ຫຼື ມີຜົນກະທົບ ທາງດ້ານສະຫວັດດີການສັດ;
   - ລະບາຍອາກາດໄດ້ດີ;
   - ອະນາໄມ ຂ້າເຊື້ອໄດ້ງ່າຍ ແລະ ບໍາລຸງຮັກສາໄດ້ສະດວກ;

- ສ້າງເງື່ອນໄຂເພື່ອເຮັດໃຫ້ ເປັດສາມາດເຄື່ອນໄຫວໄປມາ ຕາມທຳມະຊາດຂອງມັນ;
- ສາມາດເຂົ້າໄປປະຕິບັດງານໄດ້ຢ່າງມີປະສິດທິພາບ;
- ມີຄວາມປອດໄພ ທາງດ້ານຊີວະພາບ.

3) ພື້ນທີ່ ຄວນກວ້າງຂວາງ ພຽງພໍ ເໝາະສົມກັບ ພັນ, ຂະໜາດ ແລະ ອາຍຸຂອງເປັດໃນແຕ່ລະໄລຍະ ແລະ ມີເນື້ອທີ່ ເໝາະສົມທີ່ເປັນບ່ອນກິນອາຫານ ແລະ ນ້ຳ;
4) ມີມາດຕະການປ້ອງກັນ ເປັດຢູ່ພາຍໃນຄອກ ບໍ່ໃຫ້ສຳພັດກັບ ສັດຢູ່ນອກຟາມ ເປັນຕົ້ນ ນົກປ່າ ຫຼື ສັດທີ່ເປັນພາຫະນຳເຊື້ອອື່ນ;
5) ຈັດໃຫ້ມີແສງສະຫວ່າງພຽງພໍ ທີ່ຈະສາມາດດຳເນີນ ການກວດກາສັດໄດ້ ຢ່າງສະດວກ;
6) ຕິດຕັ້ງ ລະບົບໄຟຟ້າ ໃຫ້ຖືກຕ້ອງ ແລະ ເໝາະສົມ ເພື່ອຫຼີກລ້ຽງ ການເກີດໄຟຟ້າຊອດ;
7) ມີການຈັດລະບົບແຜນຜັງ ແລະ ຂັ້ນຕອນຂອງຟາມ ທີ່ເໝາະສົມ ເປັນຕົ້ນ:
   - ບ່ອນລ້ຽງເປັດຕ້ອງ ຢູ່ໃນສະຖານທີ່ ທີ່ເໝາະສົມ ສຳລັບການລ້ຽງເປັດ, ມີບ່ອນໃຫ້ເປັດພັກຢ່າງພຽງພໍ ແລະ ສາມາດລະບາຍອາກາດໄດ້ດີ;
   - ມີການແບ່ງພື້ນທີ່ລ້ຽງ ຖືກຕ້ອງຕາມຫຼັກການດ້ານສຸຂານາໄມ ເພື່ອເຮັດໃຫ້ກຳມະກອນ ສາມາດເຂົ້າໄປເຮັດວຽກຢູ່ ໃນເຂດສະອາດ ແລະ ເຂດເປື້ອນ ຕາມຂັ້ນຕອນ ຄວາມປອດໄພທາງດ້ານຊີວະພາບ ໂດຍໃຫ້ອີງໃສ່ ຄູ່ມືການຄຸ້ມຄອງ ຄວາມປອດໄພ ທາງດ້ານຊີວະພາບ ສຳລັບການລ້ຽງສັດປີກ ແບບເປັນຟາມເພື່ອຜະລິດເປັນສິນຄ້າຂອງອາຊຽນ.

- **ການຈັດການໂຮງເຮືອນ ແລະ ອຸປະກອນລ້ຽງເປັດແບບຂັງຄອກ**
  1) ເອົາໃຈໃສ່ ແລະ ຄຳນຶງເຖິງຄວາມປອດໄພດ້ານສະຖານທີ່ ແລະ ສິ່ງກໍ່ສ້າງໃຫ້ ສາມາດປົກປ້ອງສຸຂະພາບ ແລະ ສະຫວັດດີການທີ່ດີຂອງເປັດຢູ່ຕະຫຼອດເວລາ;
  2) ຄອກຂັງເປັດຕ້ອງອອກແບບ, ກໍ່ສ້າງ ແລະ ບຳລຸງຮັກສາ ເພື່ອຮັບປະກັນໃຫ້:
     - ສາມາດເປັນກອບປ້ອງກັນ, ລະບາຍອາກາດ, ໃຫ້ຄວາມອົບອຸ່ນ, ໃຫ້ແສງສະຫວ່າງ ແລະ ຖືກຕາມມາດຖານດ້ານຄວາມສະອາດ ແລະ ສຸຂານາໄມ;
     - ສາມາດ ດູແລ, ຕິດຕາມ ແລະ ກວດກາ ຝູງເປັດໄດ້ງ່າຍ;
     - ມີຄວາມສູງ, ຄວາມກວ້າງ, ຂະໜາດ ແລະ ທາງເຂົ້າທີ່ເໝາະສົມ ເພື່ອໃຫ້ສາມາດເຂົ້າໄປຈັບເປັດໄດ້ຢ່າງສະດວກ ທີ່ບໍ່ເຮັດໃຫ້ເປັດ ເກີດຄວາມກົດດັນ;
     - ເຮັດໃຫ້ເປັດສາມາດກະຈາຍຢູ່ໃນໂຮງເຮືອນ ຫຼື ເຮັດໃຫ້ລູກເປັດ ໄດ້ຮັບຄວາມອົບອຸ່ນ ຢ່າງທົ່ວເຖິງ ຫຼື ບໍ່ເຮັດໃຫ້ເປັດໃຫຍ່ເຂົ້າມາລົບກວນ.
  3) ພື້ນຜິວ ຄອກເປັດ ຕ້ອງໄດ້ອອກແບບ ແລະ ກໍ່ສ້າງ ໃຫ້ສາມາດ ຫຼຸດຜ່ອນຄວາມສ່ຽງ ທີ່ຈະເຮັດໃຫ້:
     - ເປັດໄດ້ຮັບບາດເຈັບ ຫຼື ຕິດເຊື້ອພະຍາດ;
     - ສະດວກໃນການອະນາໄມ, ຂ້າເຊື້ອ ແລະ ບຳລຸງຮັກສາ.
  4) ອຸປະກອນສຳລັບລ້ຽງເປັດ ຕ້ອງໄດ້ມີການກວດກາ ເພື່ອຮັບປະກັນ ການປະຕິບັດໜ້າທີ່ໄດ້ຢ່າງຖືກຕ້ອງ ຖ້າເຫັນວ່າມີການເປ່ເພ ຕ້ອງມີການແກ້ໄຂ ແລະ ສ້ອມແປງໃຫ້ສາມາດໃຊ້ງານໄດ້;

5) ຕ້ອງມີລະບົບເຕືອນ ໃນກໍລະນີໄຟຟ້າຂັດຂ້ອງ ແລະ/ຫຼື ມີການປ່ຽນແປງອຸນຫະພູມໃນຄອກເປັດ.

- ການຈັດການ ບ່ອນກຳບັງສຳລັບການລ້ຽງເປັດແບບປ່ອຍກາງແຈ້ງ
  1) ຕ້ອງມີ ສະຖານກຳບັງທີ່ເປັດສາມາດຫຼົບໄພ ຈາກສະພາບອາກາດທີ່ປ່ຽນແປງ ທີ່ມີແນວໂນ້ມເຮັດໃຫ້ເປັດເກີດຄວາມກົດດັນ ຈາກຄວາມຮ້ອນ ແລະ ຄວາມສ່ຽງ ຂອງການຖືກລ່າຈາກສັດພາຍນອກ;
  2) ຕ້ອງມີເດີ່ນທີ່ມີເນື້ອທີ່ພຽງພໍສຳລັບຈຳນວນເປັດທີ່ລ້ຽງ ເພື່ອໃຫ້ເປັດ ສາມາດເຄື່ອນໄຫວໄປມາ ຕາມທຳມະຊາດຂອງມັນ ເພື່ອຫຼຸດຜ່ອນຄວາມສ່ຽງ ທີ່ຈະເຮັດໃຫ້ເປັດໂຄມເຕັ່ງກັນຈົນໄດ້ຮັບບາດເຈັບ;
  3) ບໍລິເວນອ້ອມຮອບໂຮງເຮືອນ ລວມທັງເດີ່ນກາງແຈ້ງ ຕ້ອງໄດ້ມີການກວດກາຢ່າງເປັນປະຈຳ ເພື່ອປ້ອງກັນ ການສະສົມ ຂອງຂີ້ຕົມ, ຂີ້ຝຸ່ນ ຫຼື ເກີດການປົນເປື້ອນ ທີ່ ອາດຈະເປັນອັນຕະລາຍຕໍ່ສຸຂະພາບເປັດ;
  4) ຕ້ອງໄດ້ມີລະບົບການປ້ອງກັນສັດລົບກວນ ລວມທັງ ສັດນັກລ່າຕ່າງໆ.
- ໜອງນ້ຳກາງແຈ້ງສຳລັບເປັດ
  1) ໜອງນ້ຳກາງແຈ້ງສຳລັບເປັດຕ້ອງ:
     - ເໝາະສົມສຳລັບ ການລ້ຽງເປັດແບບເປັນຝາມ;
     - ອອກແບບ ແລະ ກໍ່ສ້າງ ຈາກວັດສະດຸ ທີ່ບໍ່ສາມາດກໍ່ໃຫ້ເກີດອັນຕະລາຍຕໍ່ເປັດ ຕົວຢ່າງເຊັ່ນ: ມີການແຕກຫັກ, ຂອບໜອງຊາ ຫຼື ມີສິ່ງແຫຼມຄົມ;
     - ມີການສ້ອມແປງ ແລະ ບຳລຸງຮັກສາ ໃຫ້ຢູ່ໃນສະພາບທີ່ດີຢູ່ຕະຫຼອດເວລາ;
     - ອອກແບບປ້ອງກັນບໍ່ໃຫ້ນ້ຳຮົ່ວໄຫຼ;
     - ຄຸ້ມຄອງ ແລະ ກວດກາ ນ້ຳຮົ່ວໄຫຼ ຢ່າງສະໝ່ຳສະເໝີ.
  2) ໜອງຕ້ອງໄດ້ອອກແບບ ແລະ ຄຸ້ມຄອງ ເພື່ອຮັບປະກັນໃຫ້ມີນ້ຳພຽງພໍ ຖ້ວມເປັດເວລາເປັດລົງຫຼິ້ນນ້ຳໃນໜອງ;
  3) ໜອງສຳລັບເປັດນ້ອຍເກີດໃໝ່ ຕ້ອງໄດ້ອອກແບບ ແລະ ກໍ່ສ້າງ ເພື່ອໃຫ້ເປັດນ້ອຍສາມາດຂຶ້ນ ແລະ ລົງຫຼິ້ນນ້ຳໄດ້ ຢ່າງສະດວກ. ການສ້າງທາງຂຶ້ນ ຫຼື ລົງຫຼິ້ນນ້ຳສຳລັບເປັດນ້ອຍ ຕ້ອງສ້າງໃນກໍລະນີ ທີ່ໜອງ ບໍ່ມີທາງຂຶ້ນ ຫຼື ລົງຢ່າງສະດວກ ແລະ ຄວນສ້າງຢູ່ລິເວນແຄມຂອງສິ້ນໜອງ.
  4) ຄວນສ້າງບ່ອນໃຫ້ເປັດໄດ້ກິນນ້ຳສະອາດຕ່າງຫາກ;
  5) ຕ້ອງມີການປ່ອຍນ້ຳ, ລ້າງ ແລະ ອະນາໄມໜອງ ຢ່າງສະໝ່ຳສະເໝີ.

## 5. ອາຫານເປັດ ແລະ ນ້ຳ

### 5.1 ອາຫານເປັດ

1) ອາຫານເປັດ ຕ້ອງມີພຽງພໍ, ປອດໄພ ແລະ ສະອາດທີ່ເໝາະສົມ ທາງດ້ານໂພສະນາການ ສົມດູນກັບ ຄວາມຕ້ອງການ ໃນແຕ່ລະອາຍຸ, ຂະໜາດ, ພັນ ແລະ ເພດຂອງເປັດ;

2) ຕ້ອງມີຄຸນນະພາບ ແລະ ໄດ້ມາດຕະຖານ ຕາມທີ່ຂະແໜງການກ່ຽວຂ້ອງກຳນົດ ແລະ ຕ້ອງໄດ້ມີການກວດກາຄຸນນະພາບເປັນແຕ່ລະໄລຍະ. ອາຫານສຳເລັດຮູບ ຫຼື ສ່ວນປະກອບທີ່ໃຊ້ເປັນອາຫານເປັດ ຈະຕ້ອງນຳເອົາມາຈາກແຫຼ່ງທີ່ເຊື່ອຖືໄດ້;

3) ກໍລະນີຟາມທີ່ ຜະລິດ ຫຼື ປະສົມອາຫານເອງ ຕ້ອງໄດ້ປະຕິບັດຕາມຂັ້ນຕອນ ການຜະລິດ ຫຼື ປະສົມອາຫານສັດທີ່ດີ ເພື່ອຫຼຸດຜ່ອນ ບໍ່ໃຫ້ເຊື້ອພະຍາດ ຫຼື ສານທີ່ບໍ່ເພິ່ງປາດຖະໜາ ປົນເປື້ອນໃສ່ອາຫານສັດ. ໃນກໍລະນີຈຳເປັນ ຕ້ອງໄດ້ຂໍຄຳແນະນຳ ຈາກຜູ້ຊ່ຽວຊານສະເພາະດ້ານເສັຍກ່ອນຈຶ່ງປະສົມອາຫານໃຊ້ເອງໄດ້;

4) ອາຫານສັດ ຕ້ອງບໍ່ມີ ສານເຄມີ, ສານເພີ່ມ ຫຼື ຢາທີ່ ຕ້ອງຫ້າມ ຫຼື ບໍ່ອະນຸຍາດໃຫ້ນຳໃຊ້ ຕາມທີ່ກຳນົດໄວ້ໃນລະບຽບຂອງຂະແໜງການກ່ຽວຂ້ອງ;

5) ກໍລະນີ ໄດ້ນຳໃຊ້ຢາສັດຕະວະແພດ ກ່ອນທີ່ຈະຈຳໜ່າຍເປັດ ຕ້ອງປະຕິບັດຕາມລະບຽບການຢ່າງເຄັ່ງຄັດ ໂດຍສະເພາະ ຕ້ອງຮັບປະກັນວ່າ ເປັດປອດໄພຫຼັງໄລຍະເວລາຢຸດໃຫ້ຢາກ່ອນການບໍລິໂພກ;

6) ຫ້າມນຳໃຊ້ອາຫານ ທີ່ເປັນອັນຕະລາຍຕໍ່ ສຸຂະພາບ, ຄວາມປອດໄພ ຫຼື ເປັນສາເຫດ ທີ່ເຮັດເປັດບໍ່ສະບາຍ.

## 5.2 ນ້ຳ ແລະ ຄຸນນະພາບນ້ຳ

1) ມີແຫຼ່ງນ້ຳສະອາດທີ່ປອດໄພ ພ້ອມທັງມີສິ່ງອຳນວຍຄວາມສະດວກທີ່ເໝາະສົມ ສຳລັບການເກັບ ແລະ ແຈກຢາຍນ້ຳ ຢ່າງພຽງພໍ ສຳລັບການສະໜອງນ້ຳໃຫ້ແກ່ການລ້ຽງເປັດ ແລະ ມີນຳໃຊ້ນ້ຳເພື່ອຈຸດປະສົງອື່ນ;

2) ລະບົບການບຳບັດນ້ຳ ຕ້ອງໄດ້ມີການບຳລຸງຮັກສາ ແລະ ກວດກາເປັນປະຈຳ ເພື່ອຮັບປະກັນ ການບຳບັດທີ່ມີປະສິດທິພາບ;

3) ຕ້ອງ ມີການກວດ ຄຸນນະພາບຂອງນ້ຳ ຢ່າງເປັນປົກກະຕິ ຕາມກົດໝາຍ ແລະ ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ.

# 6. ການຄຸ້ມຄອງ ບໍລິຫານຟາມ

## 6.1 ປຶ້ມຄູ່ມືການຄຸ້ມຄອງບໍລິຫານຈັດການຟາມ

ຟາມຕ້ອງມີຄູ່ມື ຫຼື ເອກະສານ ກ່ຽວກັບ ການປະຕິບັດງານທີ່ດີສຳລັບຟາມລ້ຽງເປັດ ຊຶ່ງກວມເອົາຂໍ້ມູນຕົ້ນຕໍດັ່ງລຸ່ມນີ້:

1) ຂໍ້ມູນທົ່ວໄປຂອງຟາມ, ລວມທັງສະຖານທີ່ ແລະ ແຜນງານຕ່າງໆ ທີ່ກ່ຽວຂ້ອງ;
2) ໂຄງສ້າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກຂອງຟາມ;
3) ແຫຼ່ງທີ່ມາ ຂອງເປັດ, ອາຫານ ແລະ ນ້ຳ;
4) ແຜນງານ ຄຸ້ມຄອງ ວຽກງານປອດໄພ ທາງດ້ານຊີວະພາບ;
5) ສຸຂະພາບລວມ ຂອງຝູງເປັດ;
6) ການນຳໃຊ້ ຢາສັດຕະວະແພດ ແລະ ສານເຄມີ;
7) ການຈັດການ ສິ່ງເສດເຫຼືອ ແລະ ການຄວບຄຸມດ້ານສິ່ງແວດລ້ອມ;
8) ແຜນງານ ຄຸ້ມຄອງໄຂ່ (ກໍລະນີເປັດໄຂ່);

9) ແຜນງານຄວບຄຸມ ສັດທີ່ເປັນພາຫະນຳເຊື້ອ;

10)ຂໍ້ມູນອື່ນ ທີ່ກ່ຽວຂ້ອງ.

## 6.2 ຜູ້ຈັດການຟາມ, ບຸກຄະລາກອນ ແລະ ຄົນງານ

ຜູ້ຈັດການຟາມ, ບຸກຄະລາກອນ ແລະ ຄົນງານ ຕ້ອງ:

1) ປະຕິບັດຕາມ ບັນດານິຕິກຳ ທີ່ກ່ຽວຂ້ອງກັບຟາມລ້ຽງສັດ ຊຶ່ງຈະກວມເອົາ ການຈັດການກັບ ສິ່ງແວດລ້ອມ, ທີ່ຕັ້ງຂອງຟາມ, ສະຫວັດດີການສັດ, ການຄວບຄຸມພະຍາດສັດ, ການຜະລິດອາຫານທີ່ມີປະໂຫຍດ ແລະ ອັນຕະລາຍ ຈາກການປະກອບວິຊາຊີບ ທີ່ກ່ຽວຂ້ອງກັບການລ້ຽງສັດ;
2) ຮັບເອົາບຸກຄະລາກອນທີ່ມີສຸຂະພາບສົມບູນແຂງແຮງ ແລະ ໄດ້ຮັບການກວດສຸຂະພາບປະຈຳປີ ໃນທຸກໆປີ;
3) ເປັນເຈົ້າການ ຊຸກຍູ້ການປະຕິບັດງານ ຢູ່ພາຍໃນຟາມ ທີ່ເອົາໃຈໃສ່ເຖິງຄວາມສະອາດ ແລະ ປອດໄພ. ມີອຸປະກອນປ້ອງກັນ ແລະ ເຄື່ອງມືທີ່ເໝາະສົມ ໃນເວລາປະຕິບັດໜ້າທີ່ ຢູ່ພາຍໃນຟາມ;
4) ມີຄວາມຮັບຜິດຊອບ ຕໍ່ສະຫວັດດີການສັດ ໂດຍສະໜອງ ອາຫານ, ນ້ຳ ແລະ ສະຖານທີ່ໃຫ້ເປັດ ຢ່າງພຽງພໍ ແລະ ເໝາະສົມ ເພື່ອໃຫ້ເປັດ ສາມາດໃຫ້ຜົນຜະລິດ ທີ່ດີ;
5) ປະກອບເຄື່ອງນຸ່ງ/ອຸປະກອນປ້ອງກັນ ແລະ ເກີບ ໃຫ້ເໝາະສົມ ສຳລັບ ຜູ້ບໍລິຫານຟາມ, ກຳມະກອນ ຫຼື ຜູ້ມາຢ້ຽມຢາມ ທີ່ມີຄວາມຈຳເປັນ ຕ້ອງໄດ້ເຂົ້າໄປໃນເຂດທີ່ລ້ຽງເປັດ.

## 6.3 ຄວາມອາດສາມາດ

1) ບຸກຄະລາກອນ ຂອງຟາມ ຕ້ອງໄດ້ຮັບການຝຶກອົບຮົມດ້ານວິຊາການ ກ່ຽວກັບໜ້າທີ່ ທີ່ຕົນເອງໄດ້ຮັບມອບໝາຍ ຢ່າງຕໍ່ເນື່ອງ ແລະ ເປັນປະຈຳ ນອກຈາກນັ້ນ ຄວນໄດ້ການຝຶກອົບຮົມ ເພີ່ມເຕີມ ກ່ຽວກັບການອະນາໄມຂ້າເຊື້ອຟາມ, ສຸຂານາໄມສ່ວນບຸກຄົນ, ການຈັບບັງຄັບສັດ ແລະ ສະຫວັດດີການສັດ, ການປະສົມພັນສັດ, ການນຳໃຊ້ຢາສັດຕະວະແພດ ແລະ ການກັກກັນສັດ;
2) ບຸກຄະລາກອນ ຂອງຟາມ ຕ້ອງມີຄວາມສາມາດ ໃນການປະຕິບັດໜ້າທີ່ ທີ່ຕົນເອງຮັບຜິດຊອບ ແລະ ຕ້ອງມີການຕີລາຄາ ປະເມີນຄວາມອາດສາມາດຂອງເຂົາເຈົ້າຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ;
3) ຟາມມີບຸກຄະລາກອນພຽງພໍ ຕາມຄວາມຕ້ອງການ ຂອງແຕ່ລະໜ້າວຽກ ພາຍໃນຟາມ ລວມທັງ ມີທີ່ປຶກສາ ແລະ ສັດຕະວະແພດ.

## 6.4 ດ້ານສຸຂານາໄມຂອງຟາມ

### 1) ດ້ານສຸຂານາໄມທົ່ວໄປ ຂອງຟາມ

1) ຕ້ອງມີການບົວລະບັດ ຮັກສາຟາມຢ່າງເປັນລະບົບ ເພື່ອໃຫ້ຟາມ ຢູ່ໃນສະພາບທີ່ສະອາດ ຕະຫຼອດເວລາ;

2) ຕ້ອງມີການເກັບ, ກວດ, ທຳຄວາມສະອາດ ແລະ ຂ້າເຊື້ອ ບໍລິເວນອ້ອມຮອບຟາມ ໃຫ້ໄດ້ຕາມມາດຕະຖານດ້ານສຸຂານາໄມ ຢູ່ຕະຫຼອດເວລາ. ຕ້ອງໄດ້ຕັດຫຍ້າ ຢູ່ບໍລິເວນອ້ອມຮອບໂຮງເຮືອນ ຫຼື ສີດພົ່ນຢາຂ້າຫຍ້າ ເພື່ອບໍ່ໃຫ້ເປັນແຫຼ່ງສະສົມ ຂອງສັດທີ່ເປັນພາຫະນຳເຊື້ອ;
3) ຟາມຕ້ອງມີລະບົບ ລະບາຍນ້ຳທີ່ເໝາະສົມ ແລະ ຢູ່ໃນສະພາບດີ ແລະ ສາມາດລະບາຍນ້ຳ ໄດ້ຢ່າງເປັນປົກກະຕິ ແລະ ຖືກຕ້ອງ;
4) ຕ້ອງທຳຄວາມສະອາດ ໂຮງເຮືອນ, ຄອກ ແລະ ອຸປະກອນຮັບໃຊ້ ຢ່າງເປັນປົກກະຕິ ຊຶ່ງສາມາດຫຼຸດຜ່ອນ ແມງວັນ , ກຳຈັດໜູ ແລະ ກິ່ນທີ່ບໍ່ດີ ຢູ່ພາຍໃນຟາມ;
5) ຕ້ອງນຳໃຊ້ ສານເຄມີ, ຢາຂ້າເຊື້ອ ຊະນິດທີ່ໄດ້ ມີການຮັບຮອງ ຈາກອົງການຄຸ້ມຄອງ ທີ່ກ່ຽວຂ້ອງກຳນົດເທົ່ານັ້ນ;
6) ຟາມຄວນມີ ເຄື່ອງມື ແລະ ອຸປະກອນສຳລັບປະຕິບັດ ມາດຕະການດ້ານສຸຂານາໄມທີ່ມີປະສິດທິພາບ. ເຮົາສາມາດສັງເກດເບິ່ງ ສິ່ງດັ່ງລຸ່ມນີ້ ເພື່ອຢັ້ງຢືນວ່າ ການນຳໃຊ້ ມາດຕະການທາງດ້ານສຸຂານາໄມ ມີປະສິດທິຜົນ:
   - ຄວາມສະອາດຂອງໂຮງເຮືອນ;
   - ຄວາມສະອາດຂອງ ສິ່ງອຳນວຍຄວາມສະດວກ;
   - ຄວາມສະອາດ ຂອງ ຫ້ອງຈັດເກຣດ ແລະ ສາງເກັບມ້ຽນ;
   - ບ່ອນຂ້າເຊື້ອຕີນລົດ ແລະ ອ່າງຈຸ່ມເກີບ;
   - ຟາມລ້ຽງເປັດເປັນສິນຄ້າ ຄວນປະຕິບັດ ຕາມຄູ່ມືການຈັດການຄວາມປອດໄພທາງຊີວະພາບ ສຳລັບຟາມລ້ຽງສັດປີກ ເປັນສິນຄ້າ ຂອງອາຊຽນ (ASEAN Biosecurity Management Manual for Commercial Poultry Farming for other hygiene and sanitation requirements).
7) ສຸຂານາໄມຂອງບຸກຄົນ

ບຸກຄະລາກອນ ເປັນໜຶ່ງໃນສາເຫດຕົ້ນຕໍ ທີ່ພາໃຫ້ເກີດການແຜ່ກະຈາຍ ຂອງເຊື້ອພະຍາດເຂົ້າໄປໃນຟາມ. ບຸກຄະລາກອນທຸກຄົນ ຕ້ອງເຫັນຄວາມສຳຄັນ ໃນການປະຕິບັດ ມາດຕະການ ດ້ານສຸຂານາໄມສ່ວນບຸກຄົນ ຢ່າງເຄັ່ງຄັດ ໂດຍຮັບປະກັນ ບໍ່ໃຫ້ສ້າງເງື່ອນໄຂ ທີ່ອາດເປັນສາເຫດ ທີ່ກໍ່ໃຫ້ເກີດການລະບາດຂອງພະຍາດ. ເພື່ອປ້ອງກັນບັນຫາດັ່ງກ່າວນີ້ ບຸກຄະລາກອນພາຍໃນຟາມທຸກຄົນ ຕ້ອງໄດ້ຈັດຕັ້ງປະຕິບັດ ມາດຕະການທີ່ສຳຄັນດັ່ງນີ້:

1. ບຸກຄະລາກອນທຸກຄົນ ຕ້ອງໄດ້ເຂົ້າຮ່ວມ ການຝຶກອົບຮົມ ກ່ຽວກັບ ສຸຂານາໄມທົ່ວໄປຂອງຟາມ, ສຸຂານາໄມສ່ວນບຸກຄົນ, ການຈັດການກັບສັດ, ສະຫວັດດີການສັດ, ການປະສົມພັນສັດ, ການນຳໃຊ້ຢາ ແລະ ການກັກກັນສັດ;
2. ບຸກຄະລາກອນ ຕ້ອງເປັນຜູ້ທີ່ມີສຸຂະພາບສົມບູນແຂງແຮງ ແລະ ໄດ້ຮັບການກວດສຸຂະພາບເປັນປະຈຳປີໃນທຸກໆປີ;
3. ຜູ້ລ້ຽງສັດທຸກຄົນ ຕ້ອງໄດ້ອາບນ້ຳ ແລະ ປ່ຽນເຄື່ອງນຸ່ງ ກ່ອນທີ່ຈະເຂົ້າໄປໃນເຂດທີ່ມີສັດລ້ຽງ ທຸກຄັ້ງ. ຟາມຕ້ອງ ມີການບໍລິການຊັກເຄື່ອງ ຂອງກຳມະກອນທີ່ນຸ່ງແລ້ວ. ມີເກີບບູດ ສຳລັບບຸກຄະລາກອນສະເພາະ ແຕ່ລະຄອກເປັດ;
4. ຜູ້ລ້ຽງສັດ ທີ່ປະຈຳຢູ່ແຕ່ລະຄອກ ທີ່ມີຄວາມຈຳເປັນ ຕ້ອງໄດ້ເຂົ້າໄປ ຄອກອື່ນ ທີ່ບໍ່ແມ່ນຄອກຕົນເອງປະຈຳຢູ່ ຕ້ອງໄດ້ປະຕິບັດ ມາດຕະການ ດ້ານສຸຂານາໄມ ທີ່ຈຳເປັນ ເປັນຕົ້ນວ່າ ຕ້ອງໄດ້ຈຸ່ມເກີບໂບກລົງໃນອ່າງຂ້າເຊື້ອເກີບ ຊຶ່ງຕັ້ງຢູ່ ຕາມທາງເຂົ້າຂອງທຸກຄອກ;

5. ສຳລັບຜູ້ລ້ຽງສັດ ທີ່ໄປ ເຮັດວຽກຢູ່ນອກຟາມ ຫຼື ຢ້ຽມຢາມຟາມອື່ນ ກ່ອນກັບເຂົ້າມາເຮັດວຽກໃນຟາມ ຕ້ອງກັກໂຕ ແລະ ຕິດຕາມອາການ ໃນຊ່ວງໄລຍະເວລາໃດໜຶ່ງແລ້ວ ຈຶ່ງເຂົ້າມາ ໃນເຂດທີ່ມີສັດລ້ຽງໄດ້;
6. ຕ້ອງມີການ ຄວບຄຸມການເຂົ້າອອກ ຂອງຜູ້ລ້ຽງສັດ ເພື່ອຫຼີກລ່ຽງ ການປົນເປື້ອນ ລະຫວ່າງກຸ່ມສັດທີ່ແຕກຕ່າງກັນ, ລະຫວ່າງເຂດສະອາດ ແລະ ເຂດເປື້ອນ ໂດຍຜູ້ລ້ຽງສັດຕ້ອງ ເຂົ້າໄປເຮັດວຽກໃນເຂດສະອາດກ່ອນ ແລ້ວ ຈຶ່ງເຂົ້າໄປ ໃນເຂດເປື້ອນ ແລະ ຫ້າມບໍ່ໃຫ້ເຂົ້າໄປເຂດເປື້ອນກ່ອນ ເຂົ້າໄປເຮັດວຽກໃນເຂດສະອາດໂດຍເດັດຂາດ.

### 6.5 ການຈັດການ ສິ່ງເສດເຫຼືອ

1) ບຸກຄະລາກອນພາຍໃນຟາມ ຕ້ອງໄດ້ຈັດຕັ້ງປະຕິບັດ ມາດຕະການທີ່ຈຳເປັນ ເພື່ອຮັບປະກັນວ່າ ກິດຈະກຳກ່ຽວກັບຟາມລ້ຽງສັດ ບໍ່ໄດ້ເປັນສາເຫດ ໃນການທຳລາຍສະພາບແວດລ້ອມ (ເຊັ່ນຕົວຢ່າງ ການທຳລາຍດິນ, ນ້ຳ ແລະ ອາກາດ) ແລະ ສ້າງຜົນເສັຍຫາຍ ຕໍ່ລະບົບນິເວດ;
2) ຊາກເປັດຕາຍ ຕ້ອງທຳລາຍ ດ້ວຍວິທີການ ຝັງ ຫຼື ເຜົາ ຫຼື ວິທີການອື່ນ ຕາມລະບຽບການ ທີ່ຂະແໜງການກ່ຽວຂ້ອງ ກຳນົດ;
3) ຕ້ອງໄດ້ ຄຸ້ມຄອງ ແລະ ທຳລາຍ ສິ່ງເສດເຫຼືອ ທີ່ເປັນທາດແຫຼວ ຫຼື ທາດແຂງ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການ ຂອງຂະແໜງການກ່ຽວຂ້ອງກຳນົດ;
4) ບຸກຄະລາກອນ ພາຍໃນຟາມ ຕ້ອງໄດ້ຈັດຕັ້ງປະຕິບັດ ຕາມຂັ້ນຕອນສຳລັບ ການທຳລາຍສິ່ງເສດເຫຼືອຂອງຟາມ ທີ່ເປັນທາດເຄມີ (ເຊັ່ນ: ຢາສັດຕະວະແພດ, ຢາຂ້າສັດຕູພືດ ທີ່ໝົດອາຍຸ ລວມທັງ ແກ້ວ ຫຼື ຖົງບັນຈຸ, ສີທາ) ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການ ຂອງຂະແໜງການກ່ຽວຂ້ອງກຳນົດ;
5) ບຸກຄະລາກອນ ພາຍໃນຟາມ ຕ້ອງມີຄວາມຄຸ້ນເຄີຍ ກັບຂັ້ນຕອນການທຳລາຍ ແລະ ລຳດັບກິດຈະກຳ ທີ່ຈະຕ້ອງໄດ້ຈັດຕັ້ງປະຕິບັດ, ໂດຍສະເພາະໃນກໍລະນີສຸກເສີນ;
6) ຖ້າຟາມມີບ່ອນສຳລັບ ເຮັດປຸ໋ຍໝັກ, ບ່ອນດັ່ງກ່າວຕ້ອງຕັ້ງຢູ່ ຫ່າງໄກຈາກ ເຂດດຳເນີນການຜະລິດຂອງຟາມ ແລະ ເສັ້ນທາງນ້ຳ ພ້ອມທັງ ປ້ອງກັນ ການຮົ່ວຊຶມ ໃນເວລາຝົນຕົກ;
7) ອ່າງ ແລະ ຖັງບຳບັດນ້ຳເປື້ອນ ຕ້ອງຕັ້ງຢູ່ຫ່າງຈາກ ເຂດທີ່ ທີ່ມີກິດຈະກຳຂອງຟາມ ແລະ ຄວນມີການບຳລຸງຮັກສາຢ່າງເປັນປົກກະຕິ ເພື່ອຫຼີກລ່ຽງ ບໍ່ໃຫ້ນ້ຳລົ້ນອອກມາ;
8) ໃນກໍລະນີທີ່ຕ້ອງປ່ອຍນ້ຳເປື້ອນຂອງຟາມ ອອກສູ່ແຫຼ່ງນ້ຳທຳມະຊາດ ຫຼື ສາທາລະນະ ຕ້ອງມີການບຳບັດນ້ຳ ໃຫ້ໄດ້ຕາມມາດຕະຖານ ທີ່ຂະແໜງການກ່ຽວຂ້ອງກຳນົດ ເສັຍກ່ອນ;
9) ຟາມຕ້ອງໄດ້ນຳໃຊ້ມາດຕະການ ທີ່ເໝາະສົມ ເພື່ອເຮັດໃຫ້ກິ່ນບໍ່ດີ ທີ່ເກີດມາຈາກຟາມ ໄປສູ່ສິ່ງແວດລ້ອມ ໃຫ້ມີໜ້ອຍທີ່ສຸດ;
10) ຟາມຄວນກວດສອບ ຄຸນນະພາບຂອງອາກາດ ພາຍໃນໂຮງເຮືອນ ຢ່າງສະໝ່ຳສະເໝີ ແລະ ຮັກສາໃຫ້ຢູ່ໃນລະດັບທີ່ຍອມຮັບໄດ້ ຕາມການກຳນົດຂອງ ຂະແໜງການກ່ຽວຂ້ອງ;
11) ຟາມຄວນມີມາດຕະການທີ່ເໝາະສົມເພື່ອຫຼຸດຜ່ອນກິ່ນທີ່ອອກຈາກຟາມ.

6.6 ການຄວບຄຸມແມງໄມ້ ແລະ ສັດທີ່ເປັນພາຫະນຳເຊື້ອພະຍາດ

1) ຟາມຕ້ອງ ຮັກສາໃຫ້ຢູ່ໃນສະພາບທີ່ດີ ທີສາມາດປ້ອງກັນບໍ່ໃຫ້ ແມງໄມ້ ແລະ ສັດທີ່ເປັນພາຫະນຳເຊື້ອ ເຂົ້າໄປໃນຟາມໄດ້;
2) ຟາມຄວນຕິດຕັ້ງ, ຈັດຕັ້ງປະຕິບັດ, ບຳລຸງຮັກສາ ແລະ ບັນທຶກ ລະບົບຄວບຄຸມແມງໄມ້ ແລະ ສັດທີ່ເປັນພາຫະນຳເຊື້ອ ໃຫ້ມີປະສິດທິພາບ ເພື່ອຕິດຕາມ ແລະ ຄວບຄຸມ ການລົບກວນ ຂອງສັດເຫຼົ່ານັ້ນ ຢູ່ໃນຟາມ;
3) ການນຳໃຊ້ສານເຄມີ ຂ້າແມງໄມ້ ຫຼື ສັດທີ່ເປັນພາຫະນຳເຊື້ອ ຕ້ອງນຳໃຊ້ສານ ທີ່ຖືກຮັບຮອງ ຈາກຂະແໜງ ການທີ່ກ່ຽວຂ້ອງ. ຕ້ອງບໍ່ໃຫ້ ສານເຄມີເຫຼົ່ານີ້ ມີການສຳຜັດໂດຍກົງ ກັບອາຫານສັດ ແລະ ສັດທີ່ລ້ຽງຢູ່ໃນຟາມ;
4) ການນຳໃຊ້ສານເຄມີ ທີ່ຂ້າແມງໄມ້ ຫຼື ສັດທີ່ເປັນພາຫະນຳເຊື້ອ ຕ້ອງນຳໃຊ້ໃຫ້ຖືກຕ້ອງ ຕາມການແນະນຳ ຂອງຜູ້ຜະລິດ.

7. ການຈັດການດ້ານສຸຂະພາບເປັດ

7.1 ຟາມຄວນ ນຳໃຊ້ຢາກັນ, ຢາປິ່ນປົວ ແລະ ສານເຄມີ ດ້ວຍວິທີການດ ດັ່ງລຸ່ມນີ້:

1) ມີແຜນສັກຢາກັນພະຍາດ ທີ່ເປັນລາຍລັກອັກສອນ ແລະ ຈັດຕັ້ງປະຕິບັດຢ່າງຖືກຕ້ອງ ຕາມແຜນທີ່ວາງໄວ້. ຕ້ອງມີການບັນທຶກ ໄວ້ທຸກຄັ້ງທີ່ມີການສັກຢາກັນພະຍາດ;
2) ຊະນິດຂອງຢາກັນພະຍາດ ຕ້ອງເໝາະສົມກັບ ຊະນິດ ແລະ ອາຍຸຂອງເປັດ.

7.2 ຟາມຄວນ ນຳໃຊ້ ຢາສັດຕະວະແພດ ແລະ ສານເຄມີ ດັ່ງນີ້:

1) ຢາສັດຕະວະແພດ ຫຼື ສານເຄມີ ທີ່ມານຳໃຊ້ພາຍໃນຟາມ ຕ້ອງໄດ້ຮັບການຮັບຮອງ ຈາກອົງການຄຸ້ມຄອງ ວຽກງານຢາສັດຕະວະແພດເທົ່ານັ້ນ;
2) ຢາສັດຕະວະແພດ ຕ້ອງໄດ້ເກັບຮັກສາໄວ້ໃນຕູ້ ທີ່ມີກະແຈປິດໄວ້ ແລະ ການນຳໃຊ້ ຕ້ອງ ແມ່ນສັດຕະວະແພດທີ່ຖືກແຕ່ງຕັ້ງ ປະຈຳຟາມເທົ່ານັ້ນ ເປັນຜູ້ຄວບຄຸມ ແລະ ກວດກາຕິດຕາມ ພ້ອມທັງ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3) ຢາສັດຕະວະແພດ ຫຼື ສານເຄມີ ທີ່ນຳໃຊ້ພາຍໃນຟາມ ຕ້ອງນຳໃຊ້ ແລະ ທຳລາຍ ຕາມ ຄຳແນະນຳຂອງຜູ້ຜະລິດ;
4) ຢາສັດຕະວະແພດ ຫຼື ສານເຄມີ ທີ່ມານຳໃຊ້ພາຍໃນຟາມ ຕ້ອງເກັບຮັກສາໄວ້ແຍກຕ່າງຫາກ ໃນສະຖານທີ່ ທີ່ປອດໄພ ແລະ ຫ່າງຈາກວັດຖຸປະກອບອື່ນທີ່ມີສ່ວນກ່ຽວຂ້ອງກັບສັດລ້ຽງ ພ້ອມທັງເປັນການປ້ອງກັນການປົນເປື້ອນ ໃສ່ສະພາບແວດລ້ອມ.

7.2 ການນຳເອົາເປັດເຂົ້າມາລ້ຽງໃໝ່ໃນຟາມ

1) ເປັດທຸກຊຸດທີ່ນຳມາໃໝ່ ຕ້ອງມີການເຮັດນ້ຳເບີ້ ຂຶ້ນທະບຽນ ເພື່ອໃຫ້ຮູ້ກຸ່ມເປັດທີ່ນຳເຂົ້າມາໃໝ່ ແລະ ສາມາດສືບຄົ້ນຍ້ອນຫຼັງໄດ້;
2) ເປັດທີ່ຈະນຳເຂົ້າມາລ້ຽງທົດແທນ ຈະຕ້ອງນຳມາຈາກຟາມທີ່ໄດ້ມາດຕະຖານທີ່ທາງການຮັບຮອງ ແລະ ໄດ້ຜ່ານການກວດກາ ແລະ ຢັ້ງຢືນສຸຂະພາບຂອງຝູງເປັດ ຈາກສັດຕະວະແພດຂອງຟາມ ທີ່ສົ່ງເປັດອອກ;

3) ກ່ອນນຳເຂົ້າລ້ຽງ ຕ້ອງມີການແຍກກັກກັນ ຢູ່ຄອກກັກກັນ ທີ່ແຍກຈາກຄອກຜະລິດໃນໄລຍະໃດໜຶ່ງ ເພື່ອຕິດຕາມກວດສຸຂະພາບ ແລະ ປ້ອງກັນ ການເກີດແຜ່ກະຈາຍ ຂອງເຊື້ອພະຍາດ.

## 7.3 ການດູແລສຸຂະພາບ ແລະ ຄວບຄຸມພະຍາດ

1) ຕ້ອງໄດ້ມີການຕິດຕາມສະຖານະພາບດ້ານ ສຸຂະພາບສັດ ຢູ່ພາຍໃນຟາມ ຢ່າງເປັນປົກກະຕິ. ແລະ ມີການບັນທຶກ , ເກັບຮັກສາ ແລະ ປັບປຸງຂໍ້ມູນການກວດກາຕິດຕາມ ໃຫ້ທັນກັບສະພາບ. ຕ້ອງມີ ແຜນການຄວບຄຸມສຸຂະພາບ ຂອງຝູງເປັດ ເປັນລາຍລັກອັກສອນ ແລະ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນປົກກະຕິ;
2) ມີແຜນການຮັກສາສຸຂະພາບທີ່ເໝາະສົມ ລວມທັງ ແຜນການສັກຢາກັນພະຍາດ ທີ່ໄດ້ເຫັນດີ ແລະ ຮັບຮອງ ຈາກ ສັດຕະວະແພດ ຜູ້ຄວບຄຸມຟາມ;
3) ຢາສັດຕະວະແພດ ທີ່ມານຳໃຊ້ພາຍໃນຟາມ ຕ້ອງໄດ້ຮັບການ ຮັບຮອງ ຈາກອົງການຄຸ້ມຄອງ ວຽກງານຢາສັດຕະວະ ແພດເທົ່ານັ້ນ ໂດຍມີການບັນທຶກ ການຮັບ ແລະ ການນຳໃຊ້ ທຸກຄັ້ງ. ຢາສັດຕະວະແພດ ທັງໝົດ ທີ່ນຳໃຊ້ພາຍໃນຟາມ ຕ້ອງປະຕິບັດຕາມ ຄຳແນະນຳຂອງຜູ້ຜະລິດ ຢ່າງເຄັ່ງຄັດ;
4) ຜູ້ບໍລິຫານຟາມ ຫຼື ສັດຕະວະແພດ ຕ້ອງໄດ້ລົງກວດກາສະພາບຕົວຈິງ ຢູ່ພາຍໃນຟາມ ເພື່ອສັງເກດເບິ່ງ ອາການທົ່ວໄປຂອງສັດ, ອັດຕາການຕາຍ ແລະ ອັດຕາການເຈັບປ່ວຍ. ຖ້າເຫັນວ່າສູງເກີນກວ່າ ລະດັບປົກກະຕິ ຕ້ອງໄດ້ລາຍງານໃຫ້ອົງການຄຸ້ມຄອງວຽກງານ ລ້ຽງສັດ ແລະ ສັດຕະວະແພດ ໂດຍດ່ວນ ແລະ ໃຫ້ປະຕິບັດດັ່ງນີ້:
   - ແຍກປ່ຽວສັດທີ່ຕິດພະຍາດ ອອກຈາກຝູງ ເພື່ອຫຼີກລ້ຽງການແຜ່ກະຈາຍ ພະຍາດພາຍໃນຝູງ, ຖ້າເຫັນວ່າ ມີຄວາມຈຳເປັນ, ຕ້ອງໄດ້ຂ້າສັດ ທີ່ຕິດເຊື້ອພະຍາດດັ່ງກ່າວ ດ້ວຍວິທີການ ທີ່ບໍ່ໃຫ້ສັດທໍລະມານ;
   - ຕ້ອງມີ ຄອກ/ສະຖານທີ່ ແຍກປ່ຽວສະເພາະ ຢູ່ພາຍໃນຟາມ ສຳລັບກັກກັນ "ເປັດທີ່ຕິດເຊື້ອພະຍາດ;
   - ຢາສັດຕະວະແພດ ຕ້ອງນຳໃຊ້ສະເພາະ ໃນກໍລະນີ ເພື່ອປ້ອງກັນ ແລະ ປິ່ນປົວເທົ່ານັ້ນ;
   - ເປັດທີ່ຖືກປິ່ນປົວຫາຍດີແລ້ວ ຕ້ອງບໍ່ນຳໄປຂ້າເພື່ອບໍລິໂພກ ທັນທີ ຈົນກວ່າຮັບປະກັນວ່າ ເປັດ ແລະ ຜະລິດຕະພັນເປັດດັ່ງກ່າວ ປອດໄພ ຫຼັງໄລຍະເວລາຢຸດໃຫ້ຢາກ່ອນການບໍລິໂພກ ຫຼື ຕາມການຢັ້ງຢືນ ຂອງ ສັດຕະວະແພດ ປະຈຳຟາມ.

## 7.5 ມາດຕະການ ຄວາມປອດໄພທາງດ້ານຊີວະພາບ

ການຈັດຕັ້ງປະຕິບັດ ມາດຕະການຄວາມປອດໄພ ທາງດ້ານຊີວະພາບ ແມ່ນມາດຕະການເບື້ອງຕົ້ນ ໃນການຄວບຄຸມພະຍາດ ບໍ່ໃຫ້ແຜ່ກະຈາຍເຂົ້າມາ ໃນຟາມ. ໂດຍມາດຕະການຂັ້ນພື້ນຖານ ຟາມຕ້ອງ:

1) ມີຮົ້ວ ອ້ອມຟາມ ທີ່ສາມາດປ້ອງກັນ ການສຳພັດລະຫວ່າງເປັດພາຍໃນຟາມ ກັບສັດທີ່ເປັນພາຫະນຳເຊື້ອ ເຊັ່ນ ສັດປ່າ, ສັດບໍ່ມີເຈົ້າຂອງ, ນົກປ່າ, ໝາ ແລະ ແມວ ເປັນຕົ້ນ;
2) ມີການແບ່ງເຂດແຍກອອກຈາກກັນ ຢ່າງຈະແຈ້ງ ລະຫວ່າງ ເຂດທີ່ມີສັດລ້ຽງ ແລະ ເຂດທີ່ບໍ່ມີສັດລ້ຽງ;
3) ມີປ້າຍເຕືອນ ທີ່ເໝາະສົມ ຢູ່ພາຍໃນຟາມ;
4) ຢູ່ທາງເຂົ້າ ຂອງຟາມ ແລະ ເຂດທີ່ມີສັດລ້ຽງ ຄວນມີຈຸດເຂົ້າ ແລະ ຈຸດອອກ ຂອງບຸກຄະລາກອນ ແລະ ພາຫານະ ເພື່ອທີ່ຈະສາມາດຄວບຄຸມ ການເຂົ້າອອກ ພາຍໃນຟາມໄດ້;

5) ຢູ່ທາງເຂົ້າ ຂອງຟາມ ແລະ ເຂດທີ່ມີສັດລ້ຽງ ຄວນມີ ລະບົບການຂ້າເຊື້ອ ທີ່ມີປະສິດທິພາບ ເຊັ່ນ ອ່າງຂ້າເຊື້ອ ຕີນລົດ, ອ່າງຈຸ່ມເກີບ, ບ່ອນອາບນໍ້າ, ສິ່ງອໍານວຍຄວາມສະດວກ ສໍາລັບການສີດພົ່ນ ເພື່ອປ້ອງກັນ ການແຜ່ກະຈາຍເຂົ້າມາ ຂອງເຊື້ອພະຍາດ;

6) ຢູ່ທາງເຂົ້າ ຂອງແຕ່ລະຄອກ ຫຼື ເຂດທີ່ມີສັດລ້ຽງ ຕ້ອງມີອ່າງຈຸ່ມເກີບ. ບຸກຄະລາກອນທຸກຄົນ ກ່ອນຈະເຂົ້າໄປໃນເຂດທີ່ມີສັດລ້ຽງ ຕ້ອງໄດ້ ຈຸ່ມເກີບບູດ ລົງໃນອ່າງຂ້າເຊື້ອ;

7) ຟາມຄວນມີລະບຽບບັງຄັບ ເພື່ອບໍ່ໃຫ້ ຜູ້ມາຢ້ຽມຢາມ ເຂົ້າໄປໃນເຂດທີ່ມີສັດລ້ຽງ ຍົກເວັ້ນ ສັດຕະວະແພດທີ່ເຂົ້າໄປກວດສຸຂະພາບສັດ. ໃນກໍລະນີ ທີ່ບໍ່ສາມາດຫຼີກລ່ຽງ ການເຂົ້າຢ້ຽມຊົມ ຂອງຜູ້ມາຢ້ຽມຢາມກໍໃຫ້ເຂົ້າໄປ ແຕ່ໃຫ້ຢູ່ພາຍໃນ ໄລຍະເວລາທີ່ຈໍາກັດເທົ່ານັ້ນ;

8) ກໍາມະກອນ ຫຼື ແຂກທີ່ມາຢ້ຽມຢາມ ຕ້ອງໄດ້ສວມໃສ່ ຊຸດເຄື່ອງນຸ່ງ ແລະ ອຸປະກອນປ້ອງກັນຕົວ ກ່ອນທີ່ຈະເຂົ້າໄປໃນເຂດທີ່ມີສັດລ້ຽງ. ຢູ່ຈຸດທາງເຂົ້າ ເຂດທີ່ມີສັດລ້ຽງ ຕ້ອງມີຊຸດເຄື່ອງນຸ່ງປ້ອງກັນຕົວ ແລະ ເກີບໂບກໄວ້ຢູ່ຕະຫຼອດເວລາ;

9) ຫ້າມບໍ່ໃຫ້ ນໍາໃຊ້ອຸປະກອນ ແລະ ພາຫານະ ຂອງຟາມອື່ນ;

10) ອະນຸຍາດໃຫ້ພຽງແຕ່ ພະຫານະທີ່ນໍາໃຊ້ຢູ່ພາຍໃນຟາມເທົ່ານັ້ນ ສາມາດເຂົ້າໄປໃນເຂດທີ່ມີສັດລ້ຽງ;

11) ຫ້າມບໍ່ໃຫ້ ໝາ ແລະ ແມວ ເຂົ້າໄປໃນຟາມໄດ້;

12) ນໍາໃຊ້ລະບົບການຜະລິດ ຂອງຟາມ ແບບເຂົ້າໝົດ ອອກໝົດ;

13) ເປັດທີ່ເຈັບປ່ວຍ ຕ້ອງໄດ້ປິ່ນປົວ ຫຼື ຂ້າທໍາລາຍໃນທັນທີ ເພື່ອຫຼີກລ່ຽງ ການແຜ່ກະຈາຍຂອງເຊື້ອພະຍາດ;

14) ກວດກາ ແລະ ຢັ້ງຢືນ ຂັ້ນຕອນການຈັດຕັ້ງປະຕິບັດ ມາດຕະການ ຄວາມປອດໄພ ທາງດ້ານຊີວະພາບ ເປັນແຕ່ລະໄລຍະ ເພື່ອຮັບປະກັນ ປະສິດທິພາບຂອງການນໍາໃຊ້ມາດຕະການ.

## 7.6 ການຮ່ວມມືກັບຫ້ອງວິໄຈພະຍາດສັດ

1) ຟາມລ້ຽງເປັດ ຕ້ອງມີການປະສານງານ ແລະ ໃຫ້ຄວາມຮ່ວມມືກັບຫ້ອງວິໄຈພະຍາດສັດ ໃນການເຝົ້າລະວັງ ແລະ ຕິດຕາມພະຍາດ ທີ່ຈໍາເປັນຕ້ອງແຈ້ງ ທີ່ກ່ຽວຂ້ອງກັບເປັດໃນແຕ່ລະໄລຍະ;

2) ໃນກໍລະນີ ທີ່ມີການເກີດການລະບາດ ຂອງພະຍາດພາຍໃນຟາມ ຈະຕ້ອງໄດ້ດໍາເນີນການເກັບຕົວຢ່າງຕໍ່ເນື່ອງ ຈົນກວ່າວ່າພະຍາດທີ່ກໍາລັງລະບາດ ສາມາດຄວບຄຸມໄດ້. ຕົວຢ່າງທີ່ເກັບ ຕ້ອງສົ່ງໄປວິໄຈ ເພື່ອບົ່ງມະຕິພະຍາດຢູ່ຫ້ອງວິໄຈພະຍາດສັດ ທີ່ອົງການຄຸ້ມຄອງ ວຽກງານລ້ຽງສັດ ແລະ ສັດຕະວະແພດຮັບຮອງ;

## 7.7 ຂັ້ນຕອນປະຕິບັດໃນກໍລະນີມີການສົງໄສເກີດພະຍາດລະບາດ

1) ໃນກໍລະນີ ເກີດ ຫຼື ສົງໄສ ເກີດການລະບາດ ຂອງພະຍາດຮ້າຍແຮງ ຢູ່ພາຍໃນຟາມ ຜູ້ບໍລິຫານ ຫຼື ສັດຕະວະແພດປະຈໍາຟາມ ຕ້ອງໄດ້ລາຍງານໃຫ້ແກ່ ອົງການຄຸ້ມຄອງ ວຽກງານ ລ້ຽງສັດ ແລະ ສັດຕະວະແພດ ໂດຍດ່ວນ ເພື່ອດໍາເນີນ ການສືບຄົ້ນຫາສາເຫດການລະບາດຂອງພະຍາດ;

2) ປະຕິບັດ ຂັ້ນຕອນ ຄວາມປອດໄພ ທາງດ້ານຊີວະພາບແບບສຸກເສີນ ຕາມຄູ່ມືການຈັດການຄວາມປອດໄພທາງຊີວະພາບ ຂອງອາຊຽນ ສໍາລັບຟາມລ້ຽງສັດປີກ ເປັນສິນຄ້າ (ASEAN Biosecurity Management Manual for Commercial Poultry Farming and biosecurity protocols for poultry).

### 7.7 ການຈັດການດ້ານສະຫວັດດີການສັດ

1) ບຸກຄະລາກອນ ພາຍໃນຟາມ ບໍ່ຄວນລະເລີຍຕໍ່ຫຼັກການດ້ານສະຫວັດດີການສັດ ດັ່ງຕໍ່ໄປນີ້:
   - ບໍ່ເຮັດໃຫ້ສັດຫິວ ໂດຍໃຫ້ສັດໄດ້ຮັບອາຫານ ແລະ ນ້ຳຢ່າງເໝາະສົມ ແລະ ພຽງພໍ ຕໍ່ຄວາມຕ້ອງການ;
   - ຈັດໃຫ້ສັດຢູ່ໃນສະພາບແວດລ້ອມທີ່ເໝາະສົມ, ຢູ່ສະບາຍ ທີ່ມີພື້ນທີ່ພຽງພໍ, ບໍ່ແອອັດ ແລະ ມີການລະບາຍອາກາດທີ່ດີ;
   - ມີມາດຕະການຄວບຄຸມ, ປ້ອງກັນພະຍາດ, ດູແລປິ່ນປົວ ຢ່າງເໝາະສົມ ແລະ ທັນເວລາ;
   - ບໍ່ເຮັດໃຫ້ສັດ ເກີດຄວາມກົດດັນ, ແຕກຕື່ນ ແລະ ຢ້ານກົວ ເກີນຄວາມຈຳເປັນ;
   - ຄຳນຶງເຖິງ ພຶດຕິກຳ ຕາມທຳມະຊາດຂອງສັດ ໂດຍບໍ່ກະທຳ ເກີນຂອບເຂດ ຈົນເຮັດໃຫ້ສັດ ມີພຶດຕິກຳຜິດທຳມະຊາດຂອງມັນ;
2) ບຸກຄະລາກອນ ພາຍໃນຟາມ ບໍ່ຄວນດຳເນີນການໃດ ທີ່ເປັນການທໍລະມານສັດ ເປັນຕົ້ນ:
   - ບໍ່ໄດ້ເອົາໃຈໃສ່ເບິ່ງແຍງ ດູແລສັດ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນເອງ ຫຼືມີການປະຕິບັດແບບທາລຸນ;
   - ປ່ອຍປະລະເລີຍສັດ ຈົນເຮັດໃຫ້ສັດໄດ້ຮັບຄວາມເຈັບປວດ, ທໍລະມານ ແລະ ເກີດຄວາມກົດດັນ;
   - ບໍ່ໄດ້ຮັບອາຫານທີ່ເໝາະສົມຢ່າງພຽງພໍ ສຳລັບການຈະເລີນເຕີບໂຕ ຕາມເກນປົກກະຕິ ແລະ ບໍ່ເປັນໄປຕາມສະພາບທາງດ້ານສາລີລະວິທະຍາ ຂອງສາຍພັນ;
   - ການເອົາ ພາກສ່ວນໃດໜຶ່ງຂອງຮ່າງກາຍສັດມີຊີວິດອອກ ໂດຍບໍ່ໃຫ້ຢາແກ້ປວດທີ່ພຽງພໍ ເຮັດໃຫ້ສັດເຈັບປວດ ແບບທໍລະມານ;
   - ການຂ້າສັດ, ການກັກກັນ, ການຈັດການ ຫຼື ການຂົນສົ່ງສັດມີຊີວິດ ໃນລັກສະນະທີ່ກໍ່ໃຫ້ເກີດ ຄວາມເຈັບປວດ, ທໍລະມານ ຫຼື ມີຄວາມກົດດັນ;
   - ການເກັບຮັກສາ ດູແລສັດມີຊີວິດ ຊຶ່ງສະແດງອາການ ທີ່ບໍ່ສະບາຍ ທາງດ້ານຮ່າງກາຍ ຫຼື ທາງສາລີລະວິທະຍາ ຍົກເວັ້ນແຕ່ ຈະຢູ່ພາຍໃຕ້ການ ເບິ່ງແຍງດູແລ ໂດຍກົງຈາກສັດຕະວະແພດ ທີ່ໄດ້ຮັບອະນຸຍາດ.
3) ການຈັດການດ້ານສະຫວັດດີການສັດ ໃຫ້ອີງໃສ່ ຄູ່ມືປະຕິບັດງານທີ່ດີຂອງອາຊຽນ (ASEAN) ກ່ຽວກັບສະຫວັດດີການສັດ ແລະ ຄວາມຍືນຍົງທາງດ້ານສິ່ງແວດລ້ອມ ສຳລັບ ໄກ່ຊີ້ນ, ໄກ່ໄຂ່ ແລະ ເປັດ.

## 8. ການຂົນສົ່ງ ແລະ ການເກັບຮັກສາ

### 8.1 ການຂົນສົ່ງ

1) ການຂົນສົ່ງເປັດ ຈາກຟາມໄປເຖິງຈຸດໝາຍປາຍທາງ ຕ້ອງເຮັດໃຫ້ເປັດ ໄດ້ຮັບຄວາມກົດດັນໜ້ອຍທີ່ສຸດ ແລະ ຕ້ອງດູແລບໍ່ເຮັດໃຫ້ເປັດໄດ້ຮັບບາດເຈັບ ຫຼື ຕິດພະຍາດ;
2) ຈັດໃຫ້ມີພື້ນທີ່ວ່າງ ແລະ ການລະບາຍອາກາດ ທີ່ເໝາະສົມ ໃນລະຫວ່າງການຂົນສົ່ງ;
3) ຜູ້ຂົນສົ່ງ ຕ້ອງມີຄວາມຮັບຜິດຊອບສູງ ໃນການຮັກສາດູແລ ແລະ ສະຫວັດດີການສັດ ຂອງເປັດ ຕະຫຼອດໄລຍະທາງຂອງການຂົນສົ່ງ;
4) ຕ້ອງມີໃບອະນຸຍາດການເຄື່ອນຍ້າຍ, ໃບຢັ້ງຢືນສຸຂະພາບຂອງເປັດ ແລະ ເອກະສານອື່ນ ຕາມການກຳນົດຂອງອົງການຄຸ້ມຄອງວຽກງານ ລ້ຽງສັດ ແລະ ສັດຕະວະແພດ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

5) ພາຫະນະຂົນສົ່ງເປັດ ຄວນມີເງື່ອນໄຂດັ່ງລຸ່ມນີ້:
   – ສາມາດນຳເອົາເປັດ ຂຶ້ນ ແລະ ລົງ ພາຫານະໄດ້ ຢ່າງງ່າຍດາຍ;
   – ຮັບປະກັນຄວາມປອດໄພ ຂອງຄົນ ແລະ ສັດ ຕະຫຼອດໄລຍະການຂົນສົ່ງ;
   – ມີການລ້າງ ອະນາໄມ ແລະ ຂ້າເຊື້ອ ໃຫ້ສະອາດທັງກ່ອນ ແລະ ຫຼັງການຂົນສົ່ງ;
   – ມີການຕິດຕັ້ງພື້ນພາຫານະ ທີ່ຮັບປະກັນ ຄວາມໝັ້ນຄົງ ແລະ ປອດໄພ;
   – ມີການອອກແບບ ທີ່ເໝາະສົມ ເພື່ອເກັບຮັກສາ ສິ່ງເສດເຫຼືອຈາກສັດ ຕະຫຼອດໄລຍະ ການເດີນທາງ ບໍ່ໃຫ້ຮົ່ວໄຫຼອອກ ໄປປົນເປື້ອນໃສ່ສິ່ງແວດລ້ອມ.
6) ການຂົນສົ່ງ ເປັດນ້ອຍເກີດໃໝ່ ຕ້ອງໄດ້ບັນຈຸໃສ່ກ່ອງທີ່ເໝາະສົມ ຫຼື ກ່ອງທີ່ມີການຜູກມັດທີ່ແໜ້ນໜາ ຕາມລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງ ກຳນົດ;
7) ຕ້ອງຂົນສົ່ງເປັດ ໃນຍາມທີ່ມີອາກາດເຢັນ ເພື່ອຫຼີກເວັ້ນ ອາກາດຮ້ອນທີ່ເຮັດໃຫ້ເປັດເກີດຄວາມກົດດັນ ແລະ ອິດເມື່ອຍ ພ້ອມທັງພະຍາຍາມ ເຮັດໃຫ້ໄລຍະເວລາ ຂອງການຂົນສົ່ງ ບໍ່ໃຫ້ຊັກຊ້າ ໂດຍບໍ່ມີຄວາມຈຳເປັນ.

### 8.2 ສະຖານທີ່ເກັບຮັກສາ

1) ຕ້ອງມີ ສະຖານທີ່ເກັບຮັກສາສະເພາະ ທີ່ເໝາະສົມ ສຳລັບ ອາຫານສັດ, ສານເຄມີ, ຜະລິດຕະພັນຢາສັດຕະວະແພດ, ອຸປະກອນສຳລັບການທຳຄວາມສະອາດ, ແລະ ອື່ນໆ ຢູ່ພາຍໃນຟາມ;
2) ຕ້ອງອອກແບບ ແລະ ກໍ່ສ້າງ ສະຖານທີ່ເກັບຮັກສາ ທີ່ຮັບປະກັນເຊັ່ນ:
   – ສາມາດບຳລຸງຮັກສາ ແລະ ທຳຄວາມສະອາດໄດ້ ຢ່າງພຽງພໍ ແລະ ງ່າຍດາຍ;
   – ບໍ່ໃຫ້ສັດທີ່ເປັນພາຫະນຳເຊື້ອ ຫຼື ສັດລົບກວນອື່ນ ສາມາດເຂົ້າໄປໃນສະຖານທີ່ເກັບຮັກສາໄດ້;
   – ມີການລະບາຍອາກາດ ທີ່ພຽງພໍ ແລະ ສາມາດຄວບຄຸມ ອຸນຫະພູມ ແລະ ຄວາມຊຸ່ມ.

   ຖ້າເປັນໄປໄດ້, ໃຫ້ປະຕິບັດລະບົບ ເຂົ້າກ່ອນ ອອກກ່ອນ ເຂົ້າອອກຫຼັງ.

## 9. ການບັນທຶກຂໍ້ມູນ ແລະ ສືບຄົ້ນຍ້ອນກັບ

ຟາມ ຄວນບັນທຶກຂໍ້ມູນ ກ່ຽວກັບ:

1) ການຈັດການຟາມ ແລະ ຄຸ້ມຄອງສັດພາຍໃນຟາມ;
2) ການເຮັດກາໝາຍສັດ ຫຼື ກຸ່ມສັດ;
3) ສະມັດຕະພາບ ການຜະລິດ;
4) ການເຄື່ອນຍ້າຍສັດ;
5) ອາຫານສັດ ແລະ ການໃຫ້ອາຫານສັດ;
6) ສຸຂະພາບສັດ;
7) ການສັກຢາກັນພະຍາດ ແລະ ນຳໃຊ້ຢາສັດຕະວະແພດ;
8) ການສືບຄົ້ນຍ້ອນກັບ.

ຜູ້ປະກອບການ ຟາມລ້ຽງເປັດ ຄວນສ້າງຕັ້ງ ແລະ ນຳໃຊ້ ລະບົບການສືບຄົ້ນຍ້ອນກັບ ທີ່ມີປະສິດທິພາບ. ຕ້ອງໄດ້ບັນທຶກ ແລະ ເກັບຮັກສາ ຂໍ້ມູນກ່ຽວກັບການສືບຄົ້ນຍ້ອນກັບ ໄວ້ໃນໄລຍະເວລາທີ່ກຳນົດໃດໜຶ່ງ ເພື່ອການຕີລາຄາ ປະເມີນຜົນ ຂອງລະບົບການສືບຄົ້ນຍ້ອນກັບ.

## 10. ການຄຸ້ມຄອງ ແລະ ຈັດການໄຂ່

### 10.1 ການເກັບໄຂ່

1) ໃນການເກັບໄຂ່ ຄວນນຳໃຊ້ແຕະໄຂ່ ທີ່ໄດ້ຜ່ານ ການອະນາໄມຂ້າເຊື້ອມາແລ້ວ ເທົ່ານັ້ນ. ຜູ້ເກັບໄຂ່ ຕ້ອງໄດ້ລ້າງມື ແລະ ເຊັດໃຫ້ແຫ້ງກ່ອນທີ່ຈະໄປເກັບໄຂ່. ຖ້ານຳໃຊ້ຖົງມື, ຕ້ອງໄດ້ທຳຄວາມສະອາດ ແລະ ຕາກຖົງມື ໃຫ້ແຫ້ງເສັຍກ່ອນ ຈຶ່ງມານຳໃຊ້;
2) ການເກັບໄຂ່ ຄວນເລີ່ມຕົ້ນດ້ວຍ ການເກັບໄຂ່ທີ່ປົກກະຕິ ແລະ ສະອາດກ່ອນ. ສ່ວນໄຂ່ທີ່ເປື້ອນ ຫຼື ແຕກແຫງ ຄວນເກັບຕາມຫຼັງ ແລະ ຕ້ອງແຍກເກັບໄວ້ ຕ່າງຫາກ ບໍ່ໃຫ້ປົນກັນ.

### 10.2 ການຄັດໄຂ່ ແລະ ຈັດເກຣດ

1) ໄຂ່ທີ່ໄດ້ຜ່ານ ການເກັບ ຕ້ອງຄັດເລືອກ ແລະ ຈັດເກຣດ ແລ້ວນຳໄປເກັບຮັກສາໄວ້ ຢູ່ໃນຫ້ອງທີ່ມີ ການລະບາຍອາກາດໄດ້ດີ. ອຸປະກອນ ແລະ ເຄື່ອງຈັກທັງໝົດ ທີ່ນຳໃຊ້ ຄັດໄຂ່ ຕ້ອງໄດ້ອະນາໄມ ແລະ ຂ້າເຊື້ອ ທຸກໆວັນ;
2) ໄຂ່ທີ່ເປື້ອນ, ແຫງ ຫຼື ແຕກ ຕ້ອງໄດ້ເກັບ ແຍກຕ່າງຫາກ.

### 10.3 ການເກັບຮັກສາໄຂ່

ໄຂ່ທັງໝົດ ທີ່ຄັດເລືອກແລ້ວຄວນເກັບຮັກສາໄວ້ຢູ່ໃນຫ້ອງທີ່ມີອາກາດເຢັນ ແລະ ລະບາຍອາກາດໄດ້ດີ.

### 10.4 ການຂົນສົ່ງໄຂ່

ພາຫານະ ທີ່ນຳໃຊ້ໃນການຂົນສົ່ງໄຂ່ ໄປຫາສະຖານທີ່ເກັບຮັກສາໄຂ່ ຕ້ອງໄດ້ອະນາໄມ ແລະ ຂ້າເຊື້ອທັງກ່ອນ ແລະ ຫຼັງການນຳໃຊ້ທຸກຄັ້ງ.

ໝາຍເຫດ: ວິທີການອະນາໄມ, ຂ້າເຊື້ອ ແລະ ການປະຕິບັດມາດຕະການຄວາມປອດໄພທາງດ້ານຊີວະພາບ ໃຫ້ອີງໃສ່ ຄູ່ມືການຈັດການຄວາມປອດໄພທາງຊີວະພາບ ສຳລັບຟາມລ້ຽງສັດປີກ ເປັນສິນຄ້າ ຂອງອາຊຽນ (ASEAN Biosecurity Management Manual for Commercial Poultry Farming and biosecurity protocols for poultry).

............................................................... ກລປ ...............................................................